ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ກອງເລຂາຄະນະກໍາມະການປະສານງານ
ກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ
ສປປລາວ

# ບົດບັນທຶກກອງປະຊຸມຄົບຄະນະຄັ້ງທີ 4 ຂອງຄະນະກໍາມະການປະສານງານກອງທຶນໂລກ (CCM)

ກອງປະຊຸມຄັ້ງນີ້ໄດ້ຈັດຂຶ້ນເປັນຄັ້ງທີ 4 ຂອງສົກປີ 2022 ວັນທີ 15 ທັນວາ 2022 ເວລາ 08:00 ຫາ 16:30 ທີ່ຫ້ອງປະຊຸມຊັ້ນ 14 ໂຮງແຮມດອນຈັນພາເລດ ໂດຍການເປັນປະທານ ຂອງ ທ່ານ ສຈ. ດຣ. ພູທອນ ເມືອງປາກ, ປະທານອົງການກາແດງລາວ ພ້ອມທັງເປັນປະທານ CCM.

ກອງປະຊຸມຄັ້ງນີ້ໄດ້ປະກອບມີຫຼາຍພາກສ່ວນເຂົ້າຮ່ວມເຊັ່ນ: ສະມາຊິກ ແລະ ຕົວແທນຂອງ CCM ຈໍານວນ 22 ທ່ານ (ມີສິດອອກສຽງໄດ້ 17 ທ່ານ) ແລະ ພາກສ່ວນອື່ນໆຈໍານວນ 21 ທ່ານເຊິ່ງຕາງໜ້າຈາກທີມງານກອງທຶນໂລກ, ຄະນະກໍາມະການກວດກາຂອງ CCM, ຄະນະກໍາມະການຂົນຂວາຍແຫຼ່ງທຶນຂອງ CCM, ກົມແຜນການ ແລະ ຮ່ວມມື (DPC) ກະຊວງສາທາລະນະສຸກ, ຜູ້ຕາງໜ້າຈາກໂຄງການ 3 ພະຍາດ, PR ຊວງສາທາລະນະສຸກ, PR-UNOPS, ທີມງານໂຄງການ HANSA, ບັນດາຄູ່ຮ່ວມງານ ແລະ ກອງເລຂາ CCM, ລວມທັງໝົດ 43 ທ່ານ ລວມທັງຜູ້ເຂົ້າຮ່ວມຜ່ານທາງອອນລາຍ.

## ວາລະກອງປະຊຸມ:

1. ປະເມີນແບບເຊື່ອມສານໃນການຈັດຕັ້ງປະຕິບັດວຽກງານປະຈໍາປີຂອງ CCM;
2. ປະເມີນການຈັດຕັ້ງປະຕິບັດວຽກງານໂດຍລວມປະຈໍາປີຂອງກອງເລຂາ CCM;
3. ການສະເໜີຜູ້ຕາງໜ້າ CCM ລາວ ຄົນໃໝ່ ເພື່ອເປັນຄະນະກໍາມະການ RAI RSC;
4. ລາຍງານຜົນການລົງຕິດຕາມກວດກາການຈັດຕັ້ງປະຕິບັດໂຄງການ ຮ່ວມກັບທີມງານໂຄງການ HANSA ຢູ່ແຂວງຈໍາປາສັກ;
5. ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອຈາກກອງທຶນໂລກ;
6. ລາຍງານຜົນໂດຍສັງລວມຂອງກອງປະຊຸມ RAI RSC ຄັ້ງທີ 20;
7. ສະເໜີຕາຕະລາງເວລາເພື່ອກະກຽມຂໍທຶນຮອບໃໝ່ຈາກກອງທຶນໂລກ, ໃນຊ່ວງປີ 2024-2026;
8. ຄັດເລືອກຜູ້ຮັບທຶນຫຼັກ (PR) ເພື່ອຈັດຕັ້ງປະຕິບັດທຶນຮອບໃໝ່ຈາກກອງທຶນໂລກ, ໃນຊ່ວງປີ 2024-2026
9. ແຜນການຂໍ TA ແລະ ໂຄງການສ້າງຄວາມເຂັ້ມແຂງໃນການຄຸ້ມຄອງແບບເຊື່ອມສານຂອງອາສາສະໝັກສາທາລະນະສຸກບ້ານ.

## ສະຫຼຸບສັງລວມບັນດາຈຸດສຳຄັນຂອງກອງປະຊຸມ:

ປະທານ CCM ໄດ້ຕ້ອນຮັບຢ່າງອົບອຸ່ນ ແລະ ສະແດງຄວາມຂອບໃຈມາຍັງທຸກພາກສ່ວນທີ່ເຂົ້າຮ່ວມໃນຫ້ອງປະຊຸມ ແລະ ເຂົ້າຮ່ວມທາງອອນລາຍ.

ກອງປະຊຸມໄດ້ນຳສະເໜີວາລະກອງປະຊຸມເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ມີຄຳເຫັນ ແລະ ຮັບຮອງເອົາ. ກອງເລຂາ CCM ໄດ້ຢືນຢັນວ່າຄະນະປະຊຸມແມ່ນພຽງພໍ. ສະມາຊິກ CCM ທີ່ມາຈາກສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນ ຊຶ່ງເປັນຜູ້ທີ່ໄດ້ຮັບການສະເໜີຊື່ໃຫ້ເປັນຜູ້ຕາງໜ້າຈາກ CCM ສປປ ລາວ ໄປເປັນຄະນະກຳມະການໂຄງການ RAI ພາກພື້ນ ໄດ້ມີຂໍ້ຂັດແຍ່ງທາງດ້ານຜົນປະໂຫຍດ ແລະ ຈະຖືກຍົກເວັ້ນຈາກການລົງຄະແນນສຽງເພື່ອຮັບຮອງເອົາວາລະທີ່ 3.

## ວາລະທີ 1: ປະເມີນແບບເຊື່ອມສານໃນການຈັດຕັ້ງປະຕິບັດວຽກງານປະຈຳປີຂອງ CCM

ພາຍຫຼັງທີ່ໄດ້ຮັບຟັງກອງເລຂາ CCM ສະເໜີຜົນຂອງການປະເມີນ ປະເມີນແບບເຊື່ອມສານໃນການຈັດຕັ້ງປະຕິບັດວຽກງານປະຈຳປີຂອງ CCM, ຜູ້ເຂົ້າຮ່ວມກອງປະຊຸມໄດ້ເຫັນດີກັບຜົນໄດ້ຮັບເບື້ອງຕົ້ນໂດຍລວມ ແລະ ໄດ້ມີຄຳເຫັນເພີ່ມເຕີມເພື່ອປັບປຸງຄະແນນສຳລັບບາງຕົວຊີ້ວັດຂອງຂອບວຽກງານດັ່ງລຸ່ມນີ້:

- ຕົວຊີ້ວັດທີ 9 ກ່ຽວກັບການມີສ່ວນຮ່ວມ ໄດ້ປັບປຸງຈາກຄະແນນ 2 ເປັນຄະແນນ 3;
- ຕົວຊີ້ວັດທີ 4 ກ່ຽວກັບການຈັດວາງທີ່ຕັ້ງແລະໂຄງສ້າງ ໄດ້ປັບປຸງຈາກຄະແນນ 1 ເປັນຄະແນນ 2;
- ຕົວຊີ້ວັດທີ 5 ກ່ຽວກັບການຈັດວາງທີ່ຕັ້ງແລະໂຄງສ້າງ ໄດ້ປັບປຸງຈາກຄະແນນ 2 ເປັນຄະແນນ 3;

## ວາລະທີ 2: ປະເມີນການຈັດຕັ້ງປະຕິບັດວຽກງານໂດຍລວມປະຈຳປີຂອງກອງເລຂາ CCM

- ພາຍຫຼັງໄດ້ຮັບຟັງການລາຍງານການປະເມີນການຈັດຕັ້ງປະຕິບັດວຽກງານໂດຍລວມປະຈຳປີຂອງກອງເລຂາ CCM, ບັນດາສະມາຊິກ CCM ໄດ້ຕື່ມຄະແນນໃສ່ໃນແບບຟອມ ແລະ ຜູ້ຕາງໜ້າຄະນະກຳມະການ OC ໄດ້ສະຫຼຸບ ແລະ ນຳສະເໜີຜົນຕໍ່ກອງປະຊຸມດັ່ງນີ້:

| ໜ້າທີ່/ວຽກງານທີ່ສຳຄັນ | ຕົວຊີ້ວັດທີ່ສຳຄັນ | ສະມາຊິກ CCM ໃຫ້ຄະແນນ | | |
|---|---|---|---|---|
| | | ສຳເລັດເກີນຄາດໝາຍ | ສຳເລັດຕາມຄາດໝາຍ | ສຳເລັດບາງສ່ວນ |
| **1. ການປະຕິບັດວຽກງານ**<br>ສະໜັບສະໜູນການປະຕິບັດວຽກງານຂອງ CCM | 1. ສະມາຊິກ CCM ທຸກຄົນໄດ້ຮັບການແນະນຳກ່ຽວກັບ CCM ໂດຍກົງ ຫຼື ຜ່ານທາງອີເມວ, ຊຶ່ງລວມມີ ຂໍ້ກຳນົດດ້ານຈັນຍາບັນ, ພາຍໃນ 3 ເດືອນທີ່ໄດ້ເຂົ້າເປັນສະມາຊິກ CCM. | 23.08% (3p) | 76.92% (10p) | 0 |
| | 2. ເອກະສານການຄຸ້ມຄອງຂອງ CCM ໄດ້ຖືກປັບປຸງເປັນປົກກະຕິ. | 0 | 84.62% (11 p) | 15.38% (2p) |
| | 3. ສະໜອງຂໍ້ມູນກ່ຽວກັບໂຄງການ ເພື່ອນຳໃຊ້ເຂົ້າໃນການກວດກາ ແລະ ຂະບວນການຂໍທຶນ ຢ່າງທັນເວລາ. | 30.77% (4 p) | 69.23% (9 p) | 0 |
| **ຄະແນນລວມສຳລັບການປະຕິບັດວຽກງານ** | | **17.95%** | **76.92%** | **5.13%** |
| **2. ການຕິດຕາມກວດກາ**<br>ສະໜັບສະໜູນ CCM ໃນການເພີ່ມປະສິດທິ | 1. ມີແຜນການກວດກາ CCM ປະຈຳປີ ແລະ ຖືກຈັດຕັ້ງປະຕິບັດຕາມກຳນົດເວລາ. | 30.76% (4p) | 69.23% (9p) | 0 |
| | 2. ມີບົດລາຍງານການກວດກາທີ່ມີຄຸນນະພາບ ແລະ ແຈກຢາຍໃຫ້ພາກສ່ວນທີ່ກ່ຽວຂ້ອງ | 23.08% (3p) | 76.92% (10p) | 0 |

| | | | | |
|---|---|---|---|---|
| ພາບຂອງຂະບວນການ ກວດກາ | ທັນເວລາ | | | |
| **ຄະແນນລວມສໍາລັບການຕິດຕາມກວດກາ** | | **26.92%** | **73.08%** | **0%** |
| **3. ການຈັດວາງທີ່ຕັ້ງແລະໂຄງສ້າງ CCM** | 1. ອໍານວຍຄວາມສະດວກໃຫ້ບັນດາພາກສ່ວນກ່ຽວຂ້ອງໃນການປະສານງານ ແລະ ການເຊື່ອມໂຍງ CCM ກັບເວທີການປະສານງານແຫ່ງຊາດທີ່ມີຢູ່. | 23.08% (3p) | 76.92% (10) | 0 |
| ອໍານວຍຄວາມສະດວກໃຫ້ແກ່ການສົນທະນາລະຫວ່າງບັນດາພາກສ່ວນກ່ຽວຂ້ອງທີ່ສໍາຄັນກ່ຽວກັບການຫັນປ່ຽນ ແລະ ຄວາມພະຍາຍາມເພື່ອຄວາມຍືນຍົງ | 2. ຮັບປະກັນການລວມເອົາຫົວຂໍ້ຄວາມຍືນຍົງ ແລະ ການກຽມພ້ອມໃນການຫັນປ່ຽນເຂົ້າໃນວາລະກອງປະຊຸມ CCM; ລວມທັງການລາຍງານໂດຍຫຍໍ້ກ່ຽວກັບຄໍາໝັ້ນສັນຍາການຮ່ວມທຶນ ຕໍ່ CCM ທຸກໆ 6 ເດືອນ. | 23.08% (3p) | 76.92% (10) | 0 |
| **ຄະແນນລວມສໍາລັບການຈັດວາງທີ່ຕັ້ງແລະໂຄງສ້າງ CCM** | | **23.08%** | **76.92%** | **0%** |
| **4. ການມີສ່ວນຮ່ວມ**<br>ຊຸກຍູ້ການເຂົ້າຮ່ວມຢ່າງມີຄວາມໝາຍ, ແລະ ຕັ້ງໜ້າຂອງບັນດາພາກສ່ວນທີ່ກ່ຽວຂ້ອງ | 1. ສະມາຊິກ CCM ມີສ່ວນຮ່ວມຢ່າງຫ້າວຫັນໃນໜ້າທີ່ CCM ແລະ ໃນກອງປະຊຸມ. | 23.08% (3p) | 69.23% (9) | 7.69% (1p) |
| | 2. ສະມາຊິກ CCM (ໂດຍສະເພາະຜູ້ຕາງໜ້າ CSO ແລະ KP) ໄດ້ດໍາເນີນກິດຈະກໍາເພື່ອລວບລວມຂໍ້ມູນແລະແຈກຢາຍຂໍ້ມູນພາຍໃນເຂດເລືອກຕັ້ງ (ພາກສ່ວນ)ຂອງຕົນເພື່ອປະ ກອບສ່ວນເຂົ້າໃນການຕັດສິນໃຈຂອງ CCM | 7.69% (1p) | 84.62% (11p) | 7.69% (1p) |
| **ຄະແນນລວມສໍາລັບການມີສ່ວນຮ່ວມ** | | **15.38%** | **76.93%** | **7.69%** |

## ວາລະທີ 3: ການສະເໜີຜູ້ຕາງໜ້າ CCM ລາວ ຄົນໃໝ່ ເພື່ອເປັນຄະນະກໍາມະການ RAI RSC

ພາຍຫຼັງທີ່ກອງເລຂາ CCM ໄດ້ນໍາສະເໜີຂັ້ນຕອນການຄັດເລືອກ ແລະ ສະເໜີລາຍຊື່ຜູ້ຕາງໜ້າຈາກ CCM ສປປ ລາວ ຄົນໃໝ່ທີ່ໄປເປັນຄະນະກໍາມະການ RAI RSC, CCM ໄດ້ຕົກລົງເຫັນດີແຕ່ງຕັ້ງ ທ່ານ ນາງ ປອ. ດຣ. ຄໍາແພງ ພອງລືຊາ, ຮອງຫົວໜ້າສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນ ໃຫ້ສືບຕໍ່ເປັນຕົວແທນຈາກ CCM ສປປ ລາວ ເພື່ອເປັນຄະນະກໍາມະການ RAI RSC ໃນໄລຍະທີ 2 ຂອງຮອບ 3 ປີ (ເລີ່ມແຕ່ເດືອນທັນວາ 2022 ຫາ ເດືອນພະຈິກ 2025) ແລະ ໄດ້ແຕ່ງຕັ້ງ ທ່ານ ນາງ ດຣ. ເກດມະນີ ຈັນທະກຸມມານ, ຮອງຫົວໜ້າພະແນກຄົ້ນຄ້ວານະໂຍບາຍລະບົບສາທາລະນະສຸກ, ສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນ ເປັນຄະນະກໍາມະການສໍາຮອງ ເພື່ອເສີມຂະຫຍາຍຄວາມຮ່ວມມືກັບຄູ່ຮ່ວມພັດທະນາ ແລະ RAI RSC.

## ວາລະທີ 4: ລາຍງານຜົນການລົງຕິດຕາມກວດກາການຈັດຕັ້ງປະຕິບັດໂຄງການ ຮ່ວມກັບທີມງານໂຄງການ HANSA ຢູ່ແຂວງຈໍາປາສັກ

ຜູ້ຕາງໜ້າຈາກຄະນະກວດກາ (ສະມາຊິກ CCM & OC) ໄດ້ລາຍງານຜົນການລົງຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດໂຄງການຮ່ວມກັບທີມງານໂຄງການ HANSA ທີ່ແຂວງຈໍາປາສັກ ແຕ່ວັນທີ 2-5 ພະຈິກ 2022. ການຢ້ຽມຢາມໄດ້ເນັ້ນໃສ່ການຈັດຕັ້ງປະຕິບັດວຽກງານຂອງໂຄງການ ທີ່ໄດ້ຮັບທຶນຊ່ວຍເຫຼືອຈາກ GFATM ແລະ HANSA ຢູ່ຂັ້ນແຂວງ, ເມືອງ ແລະ ສຸກສາລາ. ພາຍຫຼັງທີ່ໄດ້ຮັບຟັງບົດລາຍງານແລ້ວ, ຜູ້ເຂົ້າຮ່ວມກອງປະຊຸມເຫັນດີ ແລະ ບໍ່ໄດ້ມີຄໍາເຫັນເພີ່ມເຕີມຕໍ່ວາລະດັ່ງກ່າວນີ້.

## ວາລະທີ 5: ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອຈາກກອງທຶນໂລກ

ພາຍຫຼັງທີ່ໄດ້ຮັບຟັງການລາຍງານຈາກ:

1. ຕາງໜ້າ ຜູ້ຮັບທຶນຕົ້ນຕໍ (PR UNOPS) ແລະ ໂຄງການແຫ່ງຊາດ (CMPE) ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການ (RAI);
2. ຕາງໜ້າ ຜູ້ຮັບທຶນຕົ້ນຕໍ (PR DPC) ແລະ ໂຄງການຫ່ງຊາດ (CHAS, NTC) ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຕ້ານເອດ, ວັນນະໂລກ ແລະ ໂກວິດ (C19RM);

ຜູ້ເຂົ້າຮ່ວມກອງປະຊຸມໄດ້ມີຄໍາເຫັນເພີ່ມເຕີມດັ່ງລຸ່ມນີ້:

1. **ໂຄງການ RAI3E ແລະ ວຽກງານ C19RM:** ຜູ້ເຂົ້າຮ່ວມກອງປະຊຸມເຫັນດີ ແລະ ບໍ່ໄດ້ມີຄໍາເຫັນເພີ່ມເຕີມ;
2. **ໂຄງການ HIV:**
   - ຕາງໜ້າຈາກ CSO ໄດ້ມີຄວາມເຫັນຕໍ່ກັບຜູ້ຕິດເຊື້ອ HIV ວ່າ:
     - ການເຂົ້າເຖິງກຸ່ມເປົ້າໝາຍຍັງບໍ່ທັນປະຕິບັດໄດ້ດີເທົ່າທີ່ຄວນ;
     - ຜູ້ຕິດເຊື້ອ HIV ຍັງບໍ່ຢາກເປີດເຜີຍໂຕເອງ;
     - FSW ຢູ່ເຂດຫ່າງໄກສອກຫຼີກ ບໍ່ສະດວກໃນການເຂົ້າເຖິງການບໍລິການປິ່ນປົວ ແລະ ການຮັບຂໍ້ມູນຂ່າວສານກ່ຽວກັບການປ້ອງກັນ;
     - ມີຄວາມສ່ຽງໃນການຕິດເຊື້ອ HIV ເພີ່ມຂຶ້ນ ຍ້ອນວ່າ FSW ແມ່ນພົວພັນກັບແຂກຜ່ານທາງອອນລາຍ ແລະ ຮ້ານອາຫານທົ່ວໄປ;
     - ຍັງມີພະນັກງານ ແລະ ກຸ່ມຄົນທີ່ມີເງິນຈໍານວນໜຶ່ງ ທີ່ເອື້ອອໍານວຍ ແລະ ຮັບຊື້ບໍລິການທາງເພດກັບບັນດາເດັກນ້ອຍນັກຮຽນໂດຍບໍ່ໃສ່ຖົງຢາງອະນາໄມ ຊຶ່ງອາດຈະເຮັດໃຫ້ອັດຕາການຕິດເຊື້ອ HIV ຈາກກຸ່ມດັ່ງກ່າວ ເພີ່ມຂຶ້ນຫຼາຍກ່ວາກຸ່ມ FSW;
     - ສະເໜີໃຫ້ມີການໂຄສະນາສຸຂະສຶກສາຢູ່ບັນດາໂຮງຮຽນມັດທະຍົມຕົ້ນ ແລະ ຕອນປາຍ ເພື່ອໃຫ້ຮັບຮູ້ຂໍ້ມູນຂ່າວສານວຽກງານປ້ອງກັນ HIV;
     - ສະເໜີໃຫ້ຈັດກອງປະຊຸມເຜີຍແຜ່ວຽກງານປ້ອງກັນ HIV ໂດຍການເຊີນເຈົ້າໜ້າທີ່ຕໍາຫຼວດ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມນໍາ ເພື່ອຮັບຟັງການເຜີຍແຜ່ວຽກງານປ້ອງກັນ HIV ໃຫ້ໄວໜຸ່ມຮັບຮູ້ເຖິງຜົນກະທົບການຕິດເຊື້ອ ແລະ ວິທີການປ້ອງກັນ HIV;
     - ຜູ້ປະສານງານຂອງໂຄງການ HANSA ຕາງໜ້າຈາກ CSO ປະຈໍາຢູ່ແຂວງຈໍາປາສັກ ຍັງບໍ່ມີໜັງສືແຕ່ງຕັ້ງໜ້າທີ່ຮັບຜິດຊອບວຽກງານຕົວຈິງ;
   - ສໍາລັບຕາຕະລາງໄລຍະເວລາ Timeline ຂອງແຜນງານ TB/HIV ແມ່ນໄດ້ຕົກລົງເຫັນດີນໍາກັນແລ້ວ ເພື່ອຈັດຕັ້ງປະຕິບັດໃນການກະກຽມຂໍທຶນຮອບໃໝ່ຈາກ GF ໃຫ້ທັນເວລາ;
   - ສໍາລັບການກະກຽມການຄັດໄລ່ກຸ່ມເປົ້າໝາຍ ແມ່ນໄດ້ມີແຜນທີ່ຈະໄປຝຶກອົບຮົມຢູ່ປະເທດໄທໃນທ້າຍເດືອນມັງກອນ 2023.

3. **ໂຄງການ TB:**
   - ສະເໜີໃຫ້ມີການໂຄສະນາສຸຂະສຶກສາກ່ຽວກັບວຽກງານ TB:
     - ໃຫ້ແກ່ກຸ່ມທີ່ມີການເຊື່ອຖືງົມງວາຍ (ຜູ້ທີ່ບໍ່ມີຄວາມໝັ້ນໃຈ ແລະ ມີເງື່ອນໄຂໜ້ອຍ), ເພາະວ່າມີອັດຕາການຕິດເຊື້ອ TB ເພີ່ມຂຶ້ນ ຍ້ອນວ່າຄົນເຈັບ TB ຕິດເຊື້ອມາດົນແລ້ວ ຈຶ່ງໄດ້ເຂົ້າເຖິງການບໍລິການປິ່ນປົວ;
     - ແນະນໍາໃຫ້ຄົນເຈັບ TB ກິນຢາປິ່ນປົວໃຫ້ຕົງເວລາ ແລະ ປະຕິບັດຄົບກໍານົດຕາມແພດສັ່ງ;
     - ໃຫ້ຫຼາຍພາກສ່ວນມີສ່ວນຮ່ວມໃນການຊອກຄົ້ນກໍລະນີ TB ໃຫ້ຫຼາຍຂຶ້ນກ່ອນເກົ່າ;

## ວາລະທີ 6: ລາຍງານຜົນໂດຍສັງລວມຂອງກອງປະຊຸມ RAI RSC ຄັ້ງທີ 20

ພາຍຫຼັງທີ່ໄດ້ຮັບຟັງຜູ້ຕາງໜ້າກອງເລຂາ RAI RSC ໄດ້ລາຍງານຜົນໂດຍສັງລວມຂອງກອງປະຊຸມ RAI RSC ຄັ້ງທີ 20, ຜູ້ເຂົ້າຮ່ວມກອງປະຊຸມບໍ່ໄດ້ມີຄຳເຫັນເພີ່ມເຕີມຕໍ່ວາລະດັ່ງກ່າວນີ້:

## ວາລະທີ 7: ສະເໜີຕາຕະລາງເວລາເພື່ອກະກຽມຂໍທຶນຮອບໃໝ່ຈາກກອງທຶນໂລກ, ໃນຊ່ວງປີ 2024-2026

ພາຍຫຼັງທີ່ໄດ້ຮັບຟັງຜູ້ຕາງໜ້າກອງເລຂາ CCM ໄດ້ນຳສະເໜີຕາຕະລາງເວລາເພື່ອກະກຽມຂໍທຶນຮອບໃໝ່ຈາກກອງທຶນໂລກ, ໃນຊ່ວງປີ 2024-2026, ຜູ້ເຂົ້າຮ່ວມກອງປະຊຸມໄດ້ມີຄວາມເຫັນເພີ່ມເຕີມດັ່ງລຸ່ມນີ້:

- ຕາງໜ້າຈາກ GF ໄດ້ໃຫ້ຄວາມກະຈ່າງແຈ້ງກ່ຽວກັບການຂໍທຶນຮອບໃໝ່ວ່າ: CCM Lao PDR ບໍ່ຈຳເປັນຕ້ອງຍື່ນບົດສະເໜີຂໍທຶນສະເພາະຂອງກອງທຶນໂລກ, ແຕ່ຮ່າງເອກະສານໂຄງການ (PAD) ເຊິ່ງປະກອບດ້ວຍຂໍ້ມູນທັງຫມົດຂອງໂຄງການ HANSA ບວກກັບບາງເອກະສານຊ້ອນທ້າຍເພີ່ມເຕີມເຊັ່ນ: ບົດລາຍງານ MTR ຂອງແຜນງານ HIV/TB, PAD ຄວນໄດ້ຮັບການພັດທະນາໂດຍຜ່ານຂັ້ນຕອນການປະຊຸມປຶກສາຫາລື (country dialogue) ເຊິ່ງຈະລວມປະກອບມີຜົນຂອງກອງປະຊຸມປຶກສາຫາລື ແລະ ຄຳແນະນຳຕ່າງໆ ໂດຍອີງໃສ່ການເຈລະຈາການສະຫນອງທຶນເພື່ອລົງທຶນໃສ່ໂຄງການ HANSA 2. ພ້ອມດຽວກັນນີ້ CCM ຈະຕ້ອງເປັນເຈົ້າການໃນການຕິດຕາມ ແລະ ເຂົ້າຮ່ວມການເຈລະຈາປຶກສາຫາລືກ່ຽວກັບຂັ້ນຕອນການປະກອບເອກະສານຕ່າງໆ ລວມເຖິງການເຂົ້າເຖິງ, ການສະໜອງຂໍ້ມູນ ແລະ ການຮັບຮອງ ຮ່າງເອກະສານ PAD ເພື່ອການກະກຽມຍື່ນບົດສະເໜີຂໍທຶນຈາກ GF ໃນວັນທີ 20 ມີນາ 2023.
- ຕາງໜ້າຈາກ WB ໄດ້ມີຄຳເຫັນເພີ່ມເຕີມວ່າ: ການກະກຽມໂຄງການ HANSA 2 ແມ່ນໄດ້ປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ແລະ ໄດ້ທົບທວນແຜນການຕ່າງໆແລ້ວ. ເພື່ອເປັນການສ້າງຄວາມເຂັ້ມແຂງ ແລະ ສະໜັບສະໜູນໃຫ້ປະເທດໄດ້ບັນລຸຕາມເປົ້າໝາຍ, WB ຈະເປັນຜູ້ກະກຽມຮ່າງເອກະສານ PAD ເພື່ອໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງສາມາດເຂົ້າເຖິງ PAD ແລະ ຫວັງວ່າຈະໄດ້ຮັບຄຳແນະນຳຈາກພາກສ່ວນທີ່ກ່ຽວຂ້ອງເປັນຢ່າງດີ.

## ວາລະທີ 8: ຄັດເລືອກຜູ້ຮັບທຶນຫຼັກ (PR) ເພື່ອຈັດຕັ້ງປະຕິບັດທຶນຮອບໃໝ່ຈາກກອງທຶນໂລກ, ໃນຊ່ວງປີ 2024-2026

ພາຍຫຼັງທີ່ກອງເລຂາ CCM ໄດ້ແຈ້ງໃຫ້ກອງປະຊຸມຮັບຮູ້ກ່ຽວກັບ 6 ເງື່ອນໄຂການມີສິດໄດ້ຮັບທຶນຈາກ GF, ເຊິ່ງລວມມີການຄັດເລືອກ PR ສຳລັບການປະຕິບັດທຶນຊ່ວຍເຫຼືອຂອງກອງທຶນໂລກ. ກອງເລຂາ CCM ໄດ້ສະເໜີໃຫ້ເປີດກວ້າງໃຫ້ມີການປຶກສາຫາລືກ່ຽວກັບການຄັດເລືອກຜູ້ຮັບທຶນຫຼັກ (PR) ເພື່ອຈັດຕັ້ງປະຕິບັດທຶນຮອບໃໝ່ຈາກກອງທຶນໂລກ, ໃນຊ່ວງປີ 2024-2026, ຜູ້ເຂົ້າຮ່ວມກອງປະຊຸມປຶກສາຫາລືກັນດົນສົມຄວນ ແລະ ໄດ້ມີຄຳເຫັນເພີ່ມເຕີມດັ່ງລຸ່ມນີ້:

- CCM ມີບົດບາດໃນການຮັບຮອງເອກະສານຕ່າງໆ ແລະ ຕິດຕາມເລື່ອງການນຳໃຊ້ທຶນຊ່ວຍເຫຼືອຈາກກອງທຶນໂລກ. PR ແມ່ນອົງການໜຶ່ງທີ່ປະຕິບັດການທຶນຊ່ວຍເຫຼືອ. ອີງໃສ່ນະໂຍບາຍ ແລະ ເງື່ອນໄຂຂອງ GF, ການຄັດເລືອກ PR ຕ້ອງອີງໃສ່ການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ແລະ ຄຳນຶງເຖິງຄວາມຍືນຍົງໃນອະນາຄົດ. ຄືດັ່ງທີ່ GF ໄດ້ລົງທຶນຮ່ວມສຳລັບແຜນງານ HIV ແລະ TB ເຂົ້າໃນໂຄງການ HANSA ຊຶ່ງ DPC-MOH ເປັນຜູ້ຮັບຜິດຊອບຄຸ້ມຄອງທຶນຊ່ວຍເຫຼືອດັ່ງກ່າວ. ສະນັ້ນ, ອີງຕາມໂຄງຮ່າງການຈັດຕັ້ງໃນປັດຈຸບັນ, CCM ໄດ້ຕົກລົງເລືອກເອົາ PR ໃນປັດຈຸບັນເພື່ອໃຫ້ສືບຕໍ່ພາລະບົດບາດຂອງຕົນເປັນ PR ໃໝ່ສຳລັບ

ທຶນຊ່ວຍເຫຼືອຂອງແຜນງານ TB ແລະ HIV. ໃນຂະນະດຽວກັນ FPM ໄດ້ເຫັນດີຕາມການຕັດສິນໃຈຂອງ CCM;

- ຕາງໜ້າຈາກ DPC ໄດ້ມີຄຳເຫັນວ່າ: NPCO ພາຍໃຕ້ກົມ DPC ທີ່ມີພາລະບົດບາດເປັນໃຈກາງໃນການປະສານງານ ກັບຄູ່ຮ່ວມພັດທະນາທັງໝົດ ລວມທັງຂະແໜງການພາຍໃນ ແລະ ສາກົນໃນການລະດົມທຶນ ແລະ ການຈັດ ຕັ້ງປະຕິບັດວຽກງານໃນ 8 ແຜນງານ ຂອງ MOH.

**ກ່ອນຈະປິດກອງປະຊຸມ ທ່ານປະທານກອງປະຊຸມ ໄດ້ສະແດງຄວາມຂອບໃຈມາຍັງຜູ້ເຂົ້າຮ່ວມທັງໝົດ ແລະ ໄດ້ສະຫຼຸບບາງຄຳຄິດຄຳເຫັນທີ່ສຳຄັນ ດັ່ງນີ້:**

1. ມອບໃຫ້ກອງເລຂາ CCM ສັງລວມ ແລະ ເຜີຍແຜ່ບັນດາຂໍ້ສະເໜີ ແລະ ຄຳເຫັນຈາກກອງປະຊຸມກ່ຽວກັບ 3 ພະຍາດ ປະກອບໃສ່ໃນບົດບັນທຶກກອງປະຊຸມ ແລ້ວສົ່ງໃຫ້ PR (DPC) ແລະ ແຜນງານແຫ່ງຊາດ;
2. ມອບໃຫ້ກອງເລຂາ CCM ສັງລວມ ແລະ ເຜີຍແຜ່ບັນດາຂໍ້ສະເຫນີ ແລະ ບັນຫາທີ່ພົບເຫັນໃນການໄປຕິດຕາມຊຸກຍູ້ວຽກງານສາມພະຍາດ (ເຊັ່ນ: ພາຫະນະ, ອສບ, ພະນັກງານ) ເຊິ່ງລວມຢູ່ໃນບົດລາຍງານຂອງ OFV ແລ້ວສົ່ງໃຫ້ PR (DPC) ເພື່ອຫາວິທີການປັບປຸງແກ້ໄຂ;
3. ກອງເລຂາ CCM ຕິດຕາມ ແລະ ຊຸກຍູ້ແຜນງານແຫ່ງຊາດປະຕິບັດຕາມກຳນົດເວລາເພື່ອຮັບປະກັນວ່າການກະກຽມຍື່ນບົດສະເໜີຂໍທຶນຮອບໃໝ່ຢ່າງມີປະສິດທິພາບ ແລະ ທັນເວລາ, ສອດຄ່ອງກັບແຜນຍຸດທະສາດ ຂອງກະຊວງສາທາລະນະສຸກ ເພື່ອກຳຈັດພະຍາດໄຂ້ຍຸງ ແລະ ຫຼຸດຜ່ອນການຕິດເຊື້ອພະຍາດ TB ແລະ HIV.
4. ກອງປະຊຸມໄດ້ຕົກລົງເຫັນດີເລືອກເອົາ DPC-MOH ເພື່ອສືບຕໍ່ເປັນ PR ຂອງໂຄງການ TB/HIV ສຳລັບທຶນຊ່ວຍເຫລືອຮອບໃໝ່ຂອງກອງທຶນໂລກ.

ກອງປະຊຸມຄັ້ງນີ້ໄດ້ສຳເລັດ ແລະ ປິດລົງໃນເວລາ 16:30 ຂອງວັນທີ 15 ທັນວາ 2022.

ນະຄອນຫຼວງວຽງຈັນ, ວັນທີ 28 ທັນວາ 2022.

**ປະທານກອງປະຊຸມ**

ທ່ານ ສຈ. ດຣ. ພູທອນ ເມືອງປາກ
ປະທານອົງການກາແດງລາວ,
ປະທານ CCM

**ຜູ້ສັງລວມເນື້ອໃນກອງປະຊຸມ**

ທ່ານ ບຸດສາລີ ລັດຕະນະ
ຜູ້ປະສານງານ ແລະ ການເງິນ
ກອງເລຂາ CCM